ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 13 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 11 DEC 2024

# ຂໍ້ຕົກລົງ

# ວ່າດ້ວຍການອອກຈຳໜ່າຍຮຸ້ນ (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ ລົງວັນທີ 3 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2021;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 419/ສຄຄຊ, ລົງວັນທີ 26 ພະຈິກ 2024.

ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ລະບຽບການ ແລະ ມາດຕະການ ກ່ຽວກັບການເຄື່ອນໄຫວວຽກງານການອອກຈຳໜ່າຍຮຸ້ນ ຂອງບໍລິສັດຢູ່ ສປປ ລາວ ເພື່ອອຳນວຍຄວາມສະດວກ ແລະ ເປັນບ່ອນອີງໃຫ້ແກ່ບໍລິສັດໃນການ ລະດົມທຶນ ແນໃສ່ຮັບປະກັນໃຫ້ແກ່ການອອກຈຳໜ່າຍຮຸ້ນ ມີປະສິດທິພາບ, ມີຄວາມເປັນລະບຽບຮຽບຮ້ອຍ, ໂປ່ງໃສ ແລະ ຍຸຕິທຳ.

### ມາດຕາ 2 ການອອກຈຳໜ່າຍຮຸ້ນ

ການອອກຈຳໜ່າຍຮຸ້ນ ແມ່ນ ການນຳເອົາຮຸ້ນຂອງບໍລິສັດ ຂາຍໃຫ້ແກ່ຜູ້ລົງທຶນ ເພື່ອເປົ້າໝາຍໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ເພີ່ມທຶນ ຫຼື ລະດົມທຶນ ເພື່ອຂະຫຍາຍກິດຈະການ;
2. ປ່ຽນແປງໂຄງສ້າງການຖືຮຸ້ນ;
3. ປັນຜົນ ຫຼື ໃຫ້ເປັນລາງວັນ;
4. ເປົ້າໝາຍອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 3 (ປັບປຸງ) ອະທິບາຍຄໍາສັບ**

ຄໍາສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຮຸ້ນ** ໝາຍເຖິງ ຫຼັກຊັບປະເພດທຶນ ທີ່ບໍລິສັດມະຫາຊົນ ນໍາໃຊ້ເປັນເຄື່ອງມືລະດົມທຶນ ຊຶ່ງແບ່ງເປັນໜ່ວຍ ແຕ່ລະໜ່ວຍມີມູນຄ່າເທົ່າກັນ, ຜູ້ຖືຮຸ້ນມີຖານະເປັນເຈົ້າຂອງສ່ວນໃດສ່ວນໜຶ່ງ ແລະ ມີສິດໄດ້ຮັບຜົນປະໂຫຍດ ຕາມອັດຕາສ່ວນຮຸ້ນທີ່ຕົນຖືຄອງ;

2. **ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນ** ໝາຍເຖິງ ບໍລິສັດ, ລັດວິສາຫະກິດ ລວມທັງ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ຂໍອອກຈໍາໜ່າຍຮຸ້ນ ແລະ ຢູ່ໃນຂັ້ນຕອນການພິຈາລະນາ ຂອງສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;

3. **ບໍລິສັດອອກຈໍາໜ່າຍຮຸ້ນ** ໝາຍເຖິງ ບໍລິສັດ ທີ່ໄດ້ຮັບອະນຸຍາດຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໃນການນໍາເອົາຮຸ້ນຂອງຕົນອອກຈໍາໜ່າຍໃຫ້ແກ່ຜູ້ລົງທຶນ;

4. **ບໍລິສັດຈົດທະບຽນ** ໝາຍເຖິງ ບໍລິສັດທີ່ໄດ້ນໍາເອົາຮຸ້ນຂອງຕົນເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ;

5. **ບໍລິສັດກວດສອບ** ໝາຍເຖິງ ວິສາຫະກິດທີ່ ໄດ້ຮັບອະນຸຍາດໃຫ້ດໍາເນີນທຸລະກິດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ ເພື່ອໃຫ້ບໍລິການກວດສອບ;

6. **ບໍລິສັດຫຼັກຊັບ** ໝາຍເຖິງ ສະຖາບັນການເງິນທີ່ດໍາເນີນທຸລະກິດຫຼັກຊັບ;

7. **ທີ່ປຶກສາດ້ານການເງິນ** ໝາຍເຖິງ ບໍລິສັດຫຼັກຊັບ ທີ່ໄດ້ຮັບອະນຸຍາດຈາກ ສໍານັກງານຄະນະກໍາມະ ການຄຸ້ມຄອງຫຼັກຊັບ ໃນການດໍາເນີນທຸລະກິດຫຼັກຊັບ ເປັນທີ່ປຶກສາດ້ານການເງິນ;

8. **ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນ** ໝາຍເຖິງ ບໍລິສັດຫຼັກຊັບ ທີ່ໄດ້ຮັບອະນຸຍາດຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໃນການດໍາເນີນທຸລະກິດຫຼັກຊັບ ເປັນຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນ;

9. **ໜີ້ເກີນກໍານົດ** ໝາຍເຖິງ ໜີ້ ກັບບຸກຄົນ ແລະ ນິຕິບຸກຄົນ ທີ່ຄ້າງຊໍາລະ ຕົ້ນທຶນ ແລະ/ຫຼື ດອກເບ້ຍ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ຕາມທີ່ໄດ້ກໍານົດໄວ້ໃນສັນຍາກູ້ຢືມ;

10. **ໃບຢັ້ງຢືນການຈັດສັນຮຸ້ນ** ໝາຍເຖິງ ໜັງສືຂອງຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນ ເພື່ອແຈ້ງໃຫ້ຜູ້ລົງທຶນຊາບ ກ່ຽວກັບຜົນການຈັດສັນຮຸ້ນ ຈາກການຈອງຊື້ຮຸ້ນຂອງຕົນ;

11. **ສ່ວນເພີ່ມມູນຄ່າຮຸ້ນ (Share Premium)** ໝາຍເຖິງ ຈໍານວນເງິນສ່ວນຕ່າງລະຫວ່າງ ລາຄາຂາຍຮຸ້ນຕົນຈິງ ແລະ ມູນຄ່າກໍານົດ;

12. **ກະດານຊື້ ຂາຍຫຼັກຊັບຕະຫຼາດຫຼັກຊັບລາວ** ໝາຍເຖິງ ກະດານຮອງຮັບການຊື້ ຂາຍຫຼັກຊັບສໍາລັບບໍລິສັດມະຫາຊົນທີ່ຈົດທະບຽນຕາມເງື່ອນໄຂຂອງ ຕະຫຼາດຫຼັກຊັບລາວ ກໍານົດອອກໃນແຕ່ລະໄລຍະ;

13. **ກະດານ ຊື້ ຂາຍ ຮຸ້ນວິສາຫະກິດ ຂະໜາດນ້ອຍ ແລະ ກາງ** ໝາຍເຖິງ ກະດານຮອງຮັບການຊື້ຂາຍຫຼັກຊັບສໍາລັບວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ຕາມລະບຽບການກໍານົດ ແລະ ລວມທັງວິສາຫະກິດຖືກຖອນຈົດທະບຽນຈາກກະດານຊື້ ຂາຍຫຼັກຊັບຕະຫຼາດຫຼັກຊັບລາວ ແລະ ວິສາຫະກິດທີ່ບໍ່ມີຈຸດປະສົງຈົດທະບຽນໃນກະດານຊື້ ຂາຍຫຼັກຊັບຕະຫຼາດຫຼັກຊັບລາວ.

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນ, ບໍລິສັດອອກຈໍາໜ່າຍຮຸ້ນ, ບໍລິສັດຫຼັກຊັບ, ບໍລິສັດກວດສອບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການອອກຈໍາໜ່າຍຮຸ້ນຢູ່ ສປປ ລາວ.

## ໝວດທີ 2
## ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ

**ມາດຕາ 5 ຮູບແບບການອອກຈຳໜ່າຍຮຸ້ນ**

ການອອກຈຳໜ່າຍຮຸ້ນ ປະກອບດ້ວຍ ສາມ ຮູບແບບ ຄື: ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ, ໃນວົງຈຳກັດ ແລະ ໃຫ້ແກ່ຜູ້ຖືຮຸ້ນເດີມ.

**ມາດຕາ 6 ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ**

ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແມ່ນການອອກຈຳໜ່າຍຮຸ້ນ ຄັ້ງທຳອິດ ຫຼື ການອອກເພີ່ມ ທີ່ມີການໂຄສະນາຜ່ານພາຫະນະສື່ມວນຊົນໃນວົງກວ້າງ, ບໍ່ມີການກຳນົດປະເພດ ຫຼື ກຸ່ມຜູ້ລົງທຶນ ສະເພາະໃດໜຶ່ງ ຊຶ່ງການອອກຈຳໜ່າຍຮຸ້ນແຕ່ລະຄັ້ງ ຕ້ອງມີຜູ້ລົງທຶນຫຼາຍກວ່າ ຮ້ອຍລາຍ ຂຶ້ນໄປ.

**ມາດຕາ 7 (ປັບປຸງ) ເງື່ອນໄຂການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 13. ນອກຈາກນັ້ນ, ຍັງມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ສ້າງຕັ້ງ ແລະ ໄດ້ດຳເນີນທຸລະກິດຢ່າງໜ້ອຍ 2 ປີ ຍົກເວັ້ນ ວິສາຫະກິດລັດລົງທຶນ ແລະ ບໍລິສັດຫາກມີການ ແຍກ, ຄວບ ຫຼື ຫັນເປັນ ບໍລິສັດຮູບແບບໃໝ່ຈາກບໍລິສັດເດີມທີ່ສ້າງຕັ້ງ ແລະ ໄດ້ດຳເນີນທຸລະກິດ ຢ່າງໜ້ອຍ 2 ປີ;

2. ມີສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ສອດຄ່ອງກັບຂໍ້ຕົກລົງວ່າດ້ວຍສະພາບໍລິຫານ ແລະ ນິຕິກຳທີ່ກ່ຽວຂ້ອງ;

3. ມີເອກະສານລາຍງານການເງິນ 1 ປີ ຄືນຫຼັງ ນັບແຕ່ປີຍື່ນຄຳຮ້ອງ ແລະ ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ຊຶ່ງໄດ້ຮັບການກວດສອບຈາກບໍລິສັດກວດສອບ ແລະ ເອກະສານລາຍງານການເງິນ ປີສຸດທ້າຍ ກ່ອນວັນຍື່ນຄຳຮ້ອງ ແລະ ເອກະສານປະກອບ ການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງໄດ້ຮັບຄຳເຫັນແບບບໍ່ມີເງື່ອນໄຂ ຫຼື ແບບມີເງື່ອນໄຂ ທີ່ບໍ່ແມ່ນເງື່ອນໄຂສຳຄັນ ຊຶ່ງກະທົບຕໍ່ຜົນການດຳເນີນງານ ແລະ ຖານະການເງິນຂອງບໍລິສັດ. ສຳລັບ ເອກະສານລາຍງານການເງິນຂອງ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃນ ກະດານຊື້ ຂາຍຮຸ້ນວິສາຫະກິດຂະໜາດນ້ອຍ ແລະ ກາງ ສາມາດເລືອກໃຊ້ບໍລິການ ບໍລິສັດກວດສອບ ທີ່ໃຫ້ບໍລິການກວດສອບໃນ ກະດານຊື້ ຂາຍຮຸ້ນວິສາຫະກິດຂະໜາດນ້ອຍ ແລະ ກາງ ຫຼື ບໍລິສັດກວດສອບ ທີ່ໃຫ້ບໍລິການກວດສອບໃນ ກະດານຊື້ ຂາຍຫຼັກຊັບຕະຫຼາດຫຼັກຊັບລາວ;

4. ບໍ່ມີການປ່ຽນແປງປະເພດການດຳເນີນທຸລະກິດຕົ້ນຕໍໃນໄລຍະ 2 ປີ ຜ່ານມາ;

5. ຜູ້ມີອຳນາດຄວບຄຸມຂອງບໍລິສັດ ຕ້ອງບໍ່ປ່ຽນແປງ ພາຍໃນໄລຍະ 1 ປີ ຜ່ານມາ. ຍົກເວັ້ນ ວິສາຫະກິດລັດລົງທຶນ;

6. ມີລາຍຮັບປີສຸດທ້າຍ ກ່ອນມື້ຍື່ນເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ ມວນຊົນ ບໍ່ຫຼຸດ ໜຶ່ງຕື້ກີບ, ບໍ່ຂາດທຶນສະສົມ, ການດຳເນີນທຸລະກິດໃນ ໜຶ່ງ ປີ ຜ່ານມາມີກຳໄລສຸດທິ ແລະ ບໍ່ມີໜີ້ເກີນກຳນົດ ຊຶ່ງຄ້າງຊຳລະຕົ້ນທຶນ ຫຼື ດອກເບ້ຍ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນສັນຍາກູ້ຢືມ. ສຳລັບລາຍຮັບ ຕ້ອງມາຈາກຜົນການດຳເນີນງານຂອງທຸລະກິດຕົ້ນຕໍຂອງບໍລິສັດ ກໍລະນີ ມີລາຍຮັບ ຫຼື ລາຍຈ່າຍ ທີ່ເກີດຈາກລາຍການທີ່ກ່ຽວພັນ ຕ້ອງນຳໃຊ້ລາຄາ ຕາມການກຳນົດຂອງລັດຖະບານ (ຖ້າມີ), ຕາມການຊີ້ນຳຂອງລັດຖະບານ (ຖ້າມີ) ຫຼື ຕາມການປຽບທຽບກັບລາຄາຕະຫຼາດ;

7. ມີການຢັ້ງຢືນຄວາມພ້ອມ ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຈາກທີ່ປຶກສາດ້ານການເງິນ ແລະ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ພ້ອມດ້ວຍລາຍຊື່ທີມງານທີ່ຮັບຜິດຊອບເປັນທີ່ປຶກສາດ້ານການເງິນ ແລະ ຄ້ຳປະກັນການອອກຈຳໜ່າຍຮຸ້ນ;

8. ມີການຄ້ຳປະກັນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ລະຫວ່າງ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ກັບ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ;

9. ມີແຜນການກ່ຽວກັບ ການອອກຈຳໜ່າຍຮຸ້ນ ໃຫ້ແກ່ມວນຊົນ, ດຳເນີນທຸລະກິດ ແລະ ການຄາດຄະເນຖານະການເງິນ ຢ່າງໜ້ອຍ ສາມປີຕໍ່ໜ້າ ນັບແຕ່ປີສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ ມວນຊົນເປັນຕົ້ນໄປ ໂດຍຜ່ານການຮັບຮອງຈາກສະພາບໍລິຫານ;

10. ມີການຮັບຮູ້ ກ່ຽວກັບການຫັນເປັນບໍລິສັດ ມະຫາຊົນ, ອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບຈາກ ຄູ່ຮ່ວມສັນຍາ, ຄູ່ຄ້າ, ເຈົ້າໜີ້, ຜູ້ໃຫ້ເຊົ່າ, ຜູ້ໃຫ້ສຳປະທານ, ກຸ່ມບໍລິສັດ ຫຼື ບໍລິສັດໃນກຸ່ມ (ຖ້າມີ) ແລະ ລາຍການອື່ນໆ ທີ່ສຳຄັນ ຊຶ່ງອາດສົ່ງຜົນກະທົບຕໍ່ຖານະການເງິນ, ຜົນການດຳເນີນງານ ແລະ ການເຄື່ອນໄຫວກິດຈະການຂອງບໍລິສັດ;

11. ມີເງື່ອນໄຂອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 8 (ປັບປຸງ) ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງມີເອກະສານປະກອບຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 14. ນອກຈາກນັ້ນ, ຍັງມີເອກະສານເພີ່ມເຕີມດັ່ງນີ້:

1. ມະຕິກອງປະຊຸມຜູ້ຖືຮຸ້ນ ກ່ຽວກັບການຮັບຮອງແຜນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ການນຳໃຊ້ທຶນທີ່ລະດົມໄດ້ ຊຶ່ງຕ້ອງປະກອບມີເນື້ອໃນເປັນຕົ້ນ ເປົ້າໝາຍຜູ້ລົງທຶນ, ຈຳນວນຮຸ້ນ, ປະເພດຮຸ້ນ, ຮູບແບບການອອກຈຳໜ່າຍ, ແຜນການນຳໃຊ້ທຶນ ແລະ ການມອບສິດໃຫ້ສະພາບໍລິຫານ ໃນການຕັດສິນໃຈແທນຜູ້ຖືຮຸ້ນ ເພື່ອດຳເນີນການອອກຈຳໜ່າຍຮຸ້ນ (ຖ້າມີ), ນະໂຍບາຍເງິນປັນຜົນ ແລະ ເນື້ອໃນອື່ນໆ ຊຶ່ງມະຕິດັ່ງກ່າວຕ້ອງເປັນມະຕິທີ່ມີຜົນບັງຄັບໃຊ້ຕາມກົດໝາຍ;

2. ແຜນການອອກຈຳໜ່າຍຮຸ້ນໃຫ້ແກ່ສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານຂອງບໍລິສັດ (ຖ້າມີ);

3. ບັນຊີລາຍຊື່ຜູ້ຖືຮຸ້ນ ແຕ່ ໜຶ່ງສ່ວນຮ້ອຍ (1%) ຂຶ້ນໄປ;

4. ລາຍຊື່ ແລະ ຊີວະປະຫວັດຫຍໍ້ຂອງ ຜູ້ຖືຮຸ້ນທີ່ມີສິດອອກສຽງ ບໍ່ວ່າທາງກົງ ຫຼື ທາງອ້ອມ ຫຼາຍກວ່າ ຊາວຫ້າສ່ວນຮ້ອຍ (25%) ຂອງຈຳນວນຮຸ້ນທີ່ມີສິດອອກສຽງທັງໝົດຂອງບໍລິສັດ, ສະມາຊິກສະພາບໍລິຫານ, ຄະນະກຳມະການຕ່າງໆຂອງສະພາບໍລິຫານທັງໝົດ ແລະ ຄະນະອຳນວຍການ ຂອງບໍລິສັດ ແລະ ບໍລິສັດໃນກຸ່ມ (ຖ້າມີ);

5. ໃບຢັ້ງຢືນຄວາມພ້ອມການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຈາກ ທີ່ປຶກສາດ້ານການເງິນ ແລະ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ພ້ອມດ້ວຍລາຍຊື່ທີມງານທີ່ຮັບຜິດຊອບເປັນທີ່ປຶກສາດ້ານການເງິນ ແລະ ຄ້ຳປະກັນການອອກຈຳໜ່າຍ;

6. ເອກະສານລາຍງານການເງິນ 1 ປີ ຄືນຫຼັງ ນັບແຕ່ປີຍື່ນຄຳຮ້ອງ ແລະ ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ໃຫ້ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ຊຶ່ງໄດ້ຮັບການກວດສອບຈາກບໍລິສັດກວດສອບ ແລະ ເອກະສານລາຍງານການເງິນປະຈຳ 6 ເດືອນຕົ້ນປີ ທີ່ຜ່ານການທົບທວນຈາກບໍລິສັດກວດສອບ ກໍລະນີ ການຍື່ນຄຳຮ້ອງ ແລະ ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຫຼັງ ວັນທີ 30 ມິຖຸນາ ຂອງປີ. ສຳລັບ ເອກະສານລາຍງານການເງິນຂອງ ບໍລິສັດທີ່

ມີຈຸດປະສົງອອກຈໍາໜ່າຍຮຸ້ນໃນ ກະດານຊື້ ຂາຍຮຸ້ນວິສາຫະກິດຂະໜາດນ້ອຍ ແລະ ກາງ ສາມາດເລືອກໃຊ້ບໍລິການ ບໍລິສັດກວດສອບ ທີ່ໃຫ້ບໍລິການກວດສອບໃນ ກະດານຊື້ ຂາຍຮຸ້ນວິສາຫະກິດຂະໜາດນ້ອຍ ແລະ ກາງ ຫຼື ບໍລິສັດກວດສອບ ທີ່ໃຫ້ບໍລິການກວດສອບໃນ ກະດານຊື້ ຂາຍຫຼັກຊັບຕະຫຼາດຫຼັກຊັບລາວ ແລະ ມີເອກະສານລາຍງານການເງິນປະຈໍາ 6 ເດືອນຕົ້ນປີ ແມ່ນຕ້ອງໄດ້ຮັບການເຊັນຢັ້ງຢືນຈາກ ຝ່າຍບັນຊີ, ຝ່າຍກວດສອບພາຍໃນ ແລະ ຜູ້ອໍານວຍການຂອງບໍລິສັດດັ່ງກ່າວ ກໍລະນີ ການຍື່ນເອກະສານປະກອບການຮ້ອງຂໍອອກຈໍາໜ່າຍຮຸ້ນ ຫຼັງ ວັນທີ 30 ມິຖຸນາ ຂອງປີ;

7. ແຜນການ ກ່ຽວກັບ ການອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ, ການດໍາເນີນທຸລະກິດ ແລະ ການຄາດຄະເນຖານະການເງິນ ຢ່າງໜ້ອຍ ສາມ ປີ ຕໍ່ໜ້າ;

8. ຄໍາເຫັນຂອງ ຄະນະກໍາມະການກວດກາພາຍໃນ ກ່ຽວກັບການບໍລິຫານງານຂອງບໍລິສັດ ໃນໄລຍະຜ່ານມາ;

9. ເອກະສານ ການຮັບຮູ້ ກ່ຽວກັບການຫັນເປັນບໍລິສັດມະຫາຊົນ, ອອກຈໍາໜ່າຍຮຸ້ນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວຈາກ ຄູ່ຮ່ວມສັນຍາ, ຄູ່ຄ້າ, ເຈົ້າໜີ້, ຜູ້ໃຫ້ເຊົ່າ, ຜູ້ໃຫ້ສໍາປະທານ, ກຸ່ມບໍລິສັດ ຫຼື ບໍລິສັດໃນກຸ່ມ (ຖ້າມີ) ແລະ ເອກະສານການຮັບຮູ້ອື່ນໆ;

10. ໃບຢັ້ງຢືນຈາກສານປະຊາຊົນ ເພື່ອຢັ້ງຢືນວ່າ ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ບໍ່ຢູ່ໃນໄລຍະການຮ້ອງຟ້ອງ ຫຼື ຖືກຮ້ອງຟ້ອງ;

11. ເອກະສານອື່ນຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງຮ່ວມກັບ ທີ່ປຶກສາດ້ານການເງິນ ເປັນຜູ້ກະກຽມເອກະສານປະກອບການຮ້ອງຂໍອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນໃນແຕ່ລະຄັ້ງ, ຕ້ອງຮັບ ຜິດຊອບຕໍ່ເນື້ອໃນ ແລະ ຂໍ້ມູນທີ່ບັ່ງໄວ້ໃນເອກະສານດັ່ງກ່າວ ພ້ອມທັງ ເກັບຮັກສາເອກະສານປະຕິບັດງານ ທີ່ກ່ຽວຂ້ອງດັ່ງກ່າວ ໄວ້ຢ່າງໜ້ອຍ ສິບປີ ນັບແຕ່ສໍາເລັດການອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ເປັນຕົ້ນໄປ.

### ມາດຕາ 9 ໃບຢັ້ງຢືນຄວາມພ້ອມການອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ

ທີ່ປຶກສາທາງດ້ານການເງິນ ຕ້ອງປະກອບເອກະສານໃບຢັ້ງຢືນຄວາມພ້ອມໃນການອອກຈໍາໜ່າຍຮຸ້ນຂອງບໍລິສັດສະເໜີອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ຊຶ່ງໃບຢັ້ງຢືນຄວາມພ້ອມດັ່ງກ່າວ ຕ້ອງປະກອບມີເນື້ອໃນ ເປັນຕົ້ນແມ່ນ ສະຫຼຸບຫຍໍ້ການອອກຈໍາໜ່າຍຮຸ້ນ, ຄໍາເຫັນຕໍ່ການອອກຈໍາໜ່າຍຮຸ້ນ, ໜ້າວຽກທີ່ໄດ້ປະຕິບັດ ແລະ ບັນຫາທີ່ໜ້າເປັນຫ່ວງ ທີ່ຕິດພັນກັບການອອກຈໍາໜ່າຍຮຸ້ນ ພ້ອມທັງຄັດຕິດບົດກວດກາປະເມີນຄົບຊຸດ (Due Diligence) ຕາມການກໍານົດຂອງສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນ ຕ້ອງປະກອບເອກະສານໃບຢັ້ງຢືນຄວາມພ້ອມໃນການອອກຈໍາໜ່າຍຮຸ້ນຂອງບໍລິສັດສະເໜີອອກຈໍາໜ່າຍຮຸ້ນ ຊຶ່ງໃບຢັ້ງຢືນຄວາມພ້ອມດັ່ງກ່າວຕ້ອງປະກອບມີເນື້ອໃນ ເປັນຕົ້ນແມ່ນ ຄໍາເຫັນຕໍ່ການອອກຈໍາໜ່າຍຮຸ້ນ, ແຜນດໍາເນີນການອອກຈໍາໜ່າຍຮຸ້ນ, ເປົ້າໝາຍຜູ້ລົງທຶນ ແລະ ອື່ນໆ.

### ມາດຕາ 10 ເອກະສານລາຍງານການເງິນ

ເອກະສານລາຍງານການເງິນ ຂອງບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ປະກອບດ້ວຍ ໃບລາຍງານຖານະການເງິນ, ໃບລາຍງານຜົນການດໍາເນີນງານ, ໃບລາຍງານກະແສເງິນສົດ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ, ບົດອະທິບາຍຊ້ອນທ້າຍ ກ່ຽວກັບຫຼັກການ ແລະ ນະໂຍບາຍບັນຊີທີ່ໄດ້ນໍາໃຊ້

ແລະ ເອກະສານລາຍງານການເງິນອື່ນໆ ສຳລັບເອກະສານລາຍງານການເງິນຕ້ອງຜ່ານການກວດສອບຈາກບໍລິສັດກວດສອບ.

ກໍລະນີ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຫາກເປັນກຸ່ມບໍລິສັດ ເອກະສານລາຍງານການເງິນນັ້ນ ຕ້ອງສະແດງໃຫ້ເຫັນຂໍ້ມູນທາງການເງິນແບບແຍກກິດຈະການ ແລະ ລວມກິດຈະການ.

ເອກະສານລາຍງານການເງິນ 1 ປີ ຄືນຫຼັງ ທີ່ໃຊ້ປະກອບເຂົ້າໃນເອກະສານ ການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງສ້າງຂຶ້ນຕາມມາດຕະຖານການບັນຊີ ແລະ ມາດຕະຖານການລາຍງານດຽວກັນ ຕາມລະບຽບການທີ່ກ່ຽວຂ້ອງທີ່ປະກາດໃຊ້ໃນແຕ່ລະໄລຍະ.

ສຳລັບ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຫາກມີການ ແຍກ, ຄວບ ຫຼື ຫັນເປັນ ບໍລິສັດມະຫາຊົນ ເອກະສານລາຍງານການເງິນ 1 ປີ ຄືນຫຼັງ ຕ້ອງສ້າງຂຶ້ນໃນຮູບແບບເອກະສານລາຍງານການເງິນ ສົມມຸດຖານ ພ້ອມນັ້ນ ເອກະສານລາຍງານການເງິນ 1 ປີ ຄືນຫຼັງ ຂອງບໍລິສັດດັ່ງກ່າວກ່ອນມີການແຍກ, ຄວບ ຫຼື ຫັນ ເປັນບໍລິສັດມະຫາຊົນ ຕ້ອງໄດ້ຜ່ານການກວດສອບຈາກຜູ້ກວດສອບພາຍນອກທີ່ໄດ້ຮັບການຮັບຮອງຈາກ ຄະນະກຳມະການຄຸ້ມຄອງຫຼັກຊັບ.

ກໍລະນີ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຍື່ນຄຳຮ້ອງ ແລະ ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພາຍຫຼັງວັນທີ 30 ມິຖຸນາ ຕ້ອງປະກອບມີ ເອກະສານລາຍງານການເງິນ ປະຈຳ 6 ເດືອນຕົ້ນປີ ຂອງປີທີ່ຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ ມວນຊົນ ໂດຍຜ່ານການທົບທວນ ຈາກບໍລິສັດກວດສອບ.

ກໍລະນີ ມີເຫດການສຳຄັນເກີດຂຶ້ນ ພາຍຫຼັງວັນທ້າຍງວດ ຂອງເອກະສານລາຍງານການເງິນ ສະບັບຫຼ້າສຸດທີ່ຍື່ນ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງລາຍງານກ່ຽວກັບເຫດການດັ່ງກ່າວເພີ່ມເຕີມ ໃຫ້ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ພ້ອມທັງເປີດເຜີຍໃນໜັງສືຊວນຊື້.

**ມາດຕາ 11 ໜັງສືຊວນຊື້**

ໜັງສືຊວນຊື້ສຳລັບ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ປະກອບດ້ວຍເນື້ອໃນຕົ້ນຕໍ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 16. ນອກຈາກນັ້ນ, ຍັງມີຂໍ້ມູນເພີ່ມເຕີມ ດັ່ງນີ້:

1. ຂໍ້ມູນ ກ່ຽວກັບບໍລິສັດ ເປັນຕົ້ນ ປັດໄຈຄວາມສ່ຽງ, ໃບຢັ້ງຢືນການມອບອາກອນ, ປະຫວັດການສ້າງຕັ້ງ ແລະ ການເຄື່ອນໄຫວ ຂອງທຸລະກິດ. ສຳລັບ ປັດໄຈຄວາມສ່ຽງ ຕ້ອງປະກອບດ້ວຍ 4 ກຸ່ມຄວາມສ່ຽງຕົ້ນຕໍ ຄື: ດ້ານມະຫາພາກ, ຂະແໜງການ, ທຸລະກິດ ແລະ ການອອກຈຳໜ່າຍຮຸ້ນ;
2. ຂໍ້ມູນ ກ່ຽວກັບຊີວະປະຫວັດຫຍໍ້ ຂອງສະມາຊິກສະພາບໍລິຫານ, ຄະນະກຳມະການຕ່າງໆຂອງສະພາບໍລິຫານທັງໝົດ ແລະ ຄະນະອຳນວຍການ;
3. ຂໍ້ມູນ ກ່ຽວກັບແຜນລະອຽດກ່ຽວກັບການນຳໃຊ້ທຶນທີ່ລະດົມໄດ້ ແລະ ແຜນການດຳເນີນທຸລະກິດ;
4. ຂໍ້ມູນກ່ຽວກັບ ການຄາດຄະເນຜົນດຳເນີນງານຂອງປີທີ່ອອກຈຳໜ່າຍຮຸ້ນ.

ເນື້ອໃນຂອງໜັງສືຊວນຊື້ ຕ້ອງສ້າງຂຶ້ນບົນພື້ນຖານຂໍ້ມູນທີ່ ຄົບຖ້ວນ ແລະ ຖືກຕ້ອງ ພ້ອມທັງມີລາຍເຊັນຮັບຮອງຂອງ ປະທານສະພາບໍລິຫານ, ຜູ້ອຳນວຍການໃຫຍ່, ຝ່າຍກວດກາ, ຝ່າຍບັນຊີ ຂອງບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ, ທີ່ປຶກສາດ້ານການເງິນ ແລະ ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນ.

**ມາດຕາ 12 ສັນຍາຄ້ຳປະກັນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ**

ສັນຍາຄ້ຳປະກັນການອອກຈຳໜ່າຍຮຸ້ນ ຕ້ອງມີເນື້ອໃນຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 17 ແລະ ມີເນື້ອໃນສອດຄ່ອງກັບ ປະມວນກົດໝາຍແພ່ງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ. ນອກຈາກນັ້ນ, ສັນຍາດັ່ງກ່າວ ຕ້ອງປະກອບມີເນື້ອໃນ ກ່ຽວກັບຄ່າທຳນຽມ ແລະ ເງື່ອນໄຂການຊຳລະຄ່າທຳນຽມ.

ການຄ້ຳປະກັນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ກໍລະນີ ຂາຍບໍ່ໝົດບໍລິສັດຫຼັກຊັບທີ່ເຮັດໜ້າທີ່ເປັນຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຕ້ອງຮັບຊື້ຮຸ້ນທັງໝົດ ຫຼື ບາງສ່ວນທີ່ຍັງເຫຼືອຕາມມູນຄ່າຮຸ້ນທີ່ອອກຈຳໜ່າຍ ດັ່ງນີ້:

1. ມູນຄ່າບໍ່ເກີນ ໜຶ່ງຮ້ອຍຕື້ກີບ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຕ້ອງຮັບຊື້ ຢ່າງໜ້ອຍ ສິບຫ້າສ່ວນຮ້ອຍ (15%);
2. ມູນຄ່າແຕ່ ຮ້ອຍຕື້ກີບ ຫາ ສອງຮ້ອຍຕື້ກີບ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຕ້ອງຮັບຊື້ ຢ່າງໜ້ອຍ ສິບສ່ວນຮ້ອຍ (10%);
3. ມູນຄ່າແຕ່ ສອງຮ້ອຍຕື້ກີບ ຂຶ້ນໄປ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຕ້ອງຮັບຊື້ ຢ່າງໜ້ອຍຫ້າສ່ວນຮ້ອຍ (5%).

**ມາດຕາ 13 ການກວດກາເບື້ອງຕົ້ນເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງກວດກາເບື້ອງຕົ້ນເອກະສານການຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນພາຍໃນເວລາ 10 ວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ເປັນຕົ້ນໄປ, ກໍລະນີ ພົບເຫັນ ຂໍ້ມູນ ແລະ ເອກະສານດັ່ງກ່າວ ບໍ່ຄົບຖ້ວນ ແລະ ຖືກຕ້ອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງແຈ້ງຕອບຢ່າງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍຊາບ ເພື່ອນຳໄປດັດແກ້, ປັບປຸງ ຂໍ້ມູນ ແລະ ເອກະສານດັ່ງກ່າວໃຫ້ຄົບຖ້ວນ ແລະ ຖືກຕ້ອງ ກ່ອນສະເໜີຕໍ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອພິຈາລະນາ.

ສຳລັບ ໜັງສືຊວນຊື້, ສັນຍາຄ້ຳປະກັນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ໃບຢັ້ງຢືນຄວາມພ້ອມການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຈາກຜູ້ຄ້ຳປະກັນການອອກຈຳໜ່າຍ ສະບັບສົມບູນ ຕ້ອງສົ່ງໃຫ້ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກ່ອນໄດ້ຮັບໃບອະນຸຍາດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ.

**ມາດຕາ 14 ການພິຈາລະນາການຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ**

ການພິຈາລະນາການຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 18.

**ມາດຕາ 15 ການເປີດເຜີຍຂໍ້ມູນກ່ຽວກັບແຜນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ**

ພາຍຫຼັງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຢ່າງຄົບຖ້ວນ ແລະ ຖືກຕ້ອງແລ້ວ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ສາມາດເປີດເຜີຍຂໍ້ມູນກ່ຽວກັບການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕາມເນື້ອໃນທີ່ໄດ້ກຳນົດໄວ້ໃນເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແຕ່ບໍ່ອະນຸຍາດໃຫ້ເປີດເຜີຍຂໍ້ມູນກ່ຽວກັບ ລາຄາອອກຈຳໜ່າຍ, ໄລຍະເວລາອອກຈຳໜ່າຍຮຸ້ນທີ່ຄາດຄະເນໄວ້ ຫຼື ຂໍ້ມູນອື່ນທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ບໍ່ອະນຸຍາດໃຫ້ເປີດເຜີຍ.

ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງລາຍງານກ່ຽວກັບ ແຜນການເປີດເຜີຍຂໍ້ມູນຜ່ານພາຫະນະສື່ມວນຊົນ ໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຊາບລ່ວງໜ້າຢ່າງໜ້ອຍ 3 ວັນ ລັດຖະການ ກ່ອນວັນເປີດເຜີຍຂໍ້ມູນດັ່ງກ່າວ.

**ມາດຕາ 16 ການກໍານົດລາຄາຂອງຮຸ້ນທີ່ຈະອອກຈໍາໜ່າຍໃຫ້ແກ່ມວນຊົນ**

ການກໍານົດລາຄາຂອງຮຸ້ນທີ່ຈະອອກຈໍາໜ່າຍໃຫ້ແກ່ມວນຊົນ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 17 ຂັ້ນຕອນການອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ**

ພາຍຫຼັງໄດ້ຮັບອະນຸຍາດຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໃຫ້ອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງປະຕິບັດຕາມຂັ້ນຕອນທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 19.

ຂັ້ນຕອນການອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງໃຫ້ສໍາເລັດພາຍໃນກໍານົດເວລາ 90 ວັນ ນັບແຕ່ວັນໄດ້ຮັບອະນຸຍາດໃຫ້ອອກຈໍາໜ່າຍຮຸ້ນເປັນຕົ້ນໄປ. ກໍລະນີ ການອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ບໍ່ສໍາເລັດ ຕາມກໍານົດເວລາດັ່ງກ່າວ ບໍລິສັດອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ສາມາດສະເໜີຕໍ່ ສໍານັກງານຄະນະກໍາມະ ການຄຸ້ມຄອງຫຼັກຊັບ ເພື່ອເພີ່ມເວລາອອກຈໍາໜ່າຍຕື່ມອີກກໍໄດ້ ແຕ່ບໍ່ໃຫ້ເກີນ 30 ວັນ ແລະ ຕ້ອງສະເໜີມາຍັງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຢ່າງໜ້ອຍ 5 ວັນ ລັດຖະການ ກ່ອນວັນສິ້ນສຸດກໍານົດເວລາດັ່ງກ່າວ.

**ມາດຕາ 18 ການປະກາດກ່ຽວກັບການອະນຸຍາດໃຫ້ອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ**

ພາຍຫຼັງໄດ້ຮັບອະນຸຍາດໃຫ້ອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ຈາກສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ບໍລິສັດອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງປະກາດກ່ຽວກັບການໄດ້ຮັບອະນຸຍາດໃຫ້ອອກຈໍາໜ່າຍຮຸ້ນດັ່ງກ່າວໃຫ້ມວນຊົນຊາບ ຜ່ານເວັບໄຊຂອງຕະຫຼາດຫຼັກຊັບ, ເວັບໄຊຂອງບໍລິສັດ ແລະ ພາຫະນະສື່ມວນຊົນອື່ນຕາມຄວາມເໝາະສົມ ຢ່າງໜ້ອຍ 5 ວັນ ລັດຖະການຕໍ່ເນື່ອງ.

**ມາດຕາ 19 ການໂຄສະນາອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ຜ່ານພາຫະນະສື່ມວນຊົນ**

ບໍລິສັດອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງເຜີຍແຜ່ໜັງສືຊວນຊື້ຂອງຕົນໃຫ້ແກ່ມວນຊົນ ຜ່ານເວັບໄຊຂອງຕະຫຼາດຫຼັກຊັບ, ເວັບໄຊຂອງບໍລິສັດ ແລະ ພາຫະນະສື່ມວນຊົນອື່ນຕາມຄວາມເໝາະສົມ ແລະ ດໍາເນີນການໂຄສະນາອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ຜ່ານພາຫະນະສື່ມວນຊົນໃນວົງກວ້າງ ຢ່າງໜ້ອຍ 10 ວັນ ລັດຖະການ ກ່ອນວັນເປີດການຈອງຊື້ຮຸ້ນ.

ບໍລິສັດອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງລາຍງານກ່ຽວກັບແຜນການໂຄສະນາອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ຜ່ານພາຫະນະສື່ມວນຊົນ ໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ລ່ວງໜ້າຢ່າງໜ້ອຍ 3 ວັນ ລັດຖະການ ກ່ອນວັນເລີ່ມໂຄສະນາ.

**ມາດຕາ 20 ການຈອງຊື້ຮຸ້ນ ແລະ ວາງເງິນມັດຈໍາ**

ການຈອງຊື້ຮຸ້ນ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນໜັງສືຊວນຊື້ ໂດຍຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນ ຕ້ອງແຈກຢາຍໃບຈອງຊື້ຮຸ້ນ ໃຫ້ແກ່ຜູ້ລົງທຶນ ທີ່ສົນໃຈຊື້ຮຸ້ນ ພ້ອມດ້ວຍ ໜັງສືຊວນຊື້ ໃນຮູບແບບຂອງ

ສຳເນົາເອກະສານ ຫຼື ໃນຮູບແບບເອເລັກໂຕຣນິກ ຍົກເວັ້ນ ກໍລະນີທີ່ ຜູ້ລົງທຶນ ໄດ້ສະແດງເຈດຈຳນົງ ທີ່ຈະບໍ່ຮັບເອົາໜັງສືຊວນຊື້ດັ່ງກ່າວ.

ເວລາເປີດການຈອງຊື້ຮຸ້ນ ຜູ້ລົງທຶນ ຕ້ອງໂອນເງິນມັດຈຳໃຫ້ຄົບຖ້ວນ ຕາມມູນຄ່າຮຸ້ນທີ່ຕົນສັ່ງຈອງເຂົ້າໃນ ບັນຊີເງິນສະເພາະສຳລັບການເປີດຈອງຊື້ຮຸ້ນ ຂອງຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ທີ່ເປີດຢູ່ໃນທະນາຄານທຸລະກິດໃດໜຶ່ງຢູ່ ສປປ ລາວ ພ້ອມທັງແຈ້ງຜົນກ່ຽວກັບການໂອນເງິນມັດຈຳໃຫ້ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນຊາບ.

ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງລາຍງານຜົນການຈອງຊື້ຮຸ້ນປະຈຳວັນ ໃຫ້ແກ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບ ພາຍໃນເວລາໜຶ່ງວັນລັດຖະການ ຖັດມາ.

ໃນໄລຍະເວລາເປີດການຈອງຊື້ຮຸ້ນ ຜູ້ລົງທຶນໃດ ທີ່ໄດ້ສຳເລັດການຈອງຊື້ຮຸ້ນ ແລະ ວາງເງິນມັດຈຳແລ້ວ ແມ່ນບໍ່ສາມາດຍົກເລີກການຈອງຊື້ຮຸ້ນຂອງຕົນໄດ້ ຍົກເວັ້ນກໍລະນີ ໄດ້ຕົກລົງໄວ້ເປັນຢ່າງອື່ນ.

ກໍລະນີ ຂາຍບໍ່ໝົດ ພາຍໃນເວລາ ທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ອະນຸຍາດ, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ສາມາດສະເໜີຂະຫຍາຍໄລຍະເວລາເປີດການຈອງຊື້ຮຸ້ນ ໄດ້ໜຶ່ງຄັ້ງ ແຕ່ບໍ່ເກີນ 30 ວັນ.

ສຳລັບ ຜູ້ຈອງຊື້ຮຸ້ນທີ່ບໍ່ຍົກເລີກການຈອງຊື້ຮຸ້ນ ໃນໄລຍະຂະຫຍາຍເວລາເປີດການຈອງຊື້ຮຸ້ນ, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຕ້ອງຮັບຜິດຊອບຈ່າຍດອກເບ້ຍໃຫ້ແກ່ຜູ້ຈອງຊື້ຮຸ້ນ ຕາມອັດຕາດອກເບ້ຍເງິນຝາກປະຢັດຂອງທະນາຄານຕົວແທນ ຂອງຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນໃນໄລຍະນັ້ນ ນັບແຕ່ວັນທີ່ມີການຂະຫຍາຍໄລຍະເວລາເປີດການຈອງຊື້ຮຸ້ນ ຈົນກວ່າຈະສິ້ນສຸດໄລຍະເວລາເປີດການຈອງຊື້ຮຸ້ນ.

**ມາດຕາ 21 ການຈັດສັນຮຸ້ນ**

ພາຍຫຼັງຜູ້ລົງທຶນສຳເລັດການຈອງຊື້ຮຸ້ນ ແລະ ໂອນເງິນມັດຈຳ ເຂົ້າໃນບັນຊີເງິນສະເພາະສຳລັບການເປີດຈອງຊື້ຮຸ້ນ, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຕ້ອງດຳເນີນການຈັດສັນຮຸ້ນໃຫ້ຜູ້ລົງທຶນທີ່ໄດ້ຈອງຊື້ຮຸ້ນຕາມວິທີການຈັດສັນຮຸ້ນ ທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 11 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 22 ການສົ່ງເງິນມັດຈຳຄືນ**

ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງສົ່ງເງິນມັດຈຳຄືນ ໃຫ້ແກ່ຜູ້ຈອງຊື້ຮຸ້ນ ກໍລະນີມີການຂະຫຍາຍໄລຍະເວລາເປີດການຈອງຊື້ຮຸ້ນ, ການບໍ່ໄດ້ຮັບການແບ່ງປັນຮຸ້ນ, ການອອກຈຳໜ່າຍຮຸ້ນບໍ່ສຳເລັດ, ການໂຈະການອອກຈຳໜ່າຍຮຸ້ນ ແລະ ການຍົກເລີກການອອກຈຳໜ່າຍຮຸ້ນ.

ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງສົ່ງເງິນມັດຈຳຄືນໃຫ້ແກ່ຜູ້ຈອງຊື້ຮຸ້ນ ພາຍໃນກຳນົດເວລາ 5 ວັນລັດຖະການ ນັບແຕ່ວັນຂະຫຍາຍໄລຍະເວລາການເປີດການຈອງຊື້ຮຸ້ນ, ວັນສິ້ນສຸດການອອກຈຳໜ່າຍຮຸ້ນ, ວັນໄດ້ຮັບການຢັ້ງຢືນຜົນການອອກຈຳໜ່າຍຮຸ້ນ, ວັນສະເໜີຂອງຜູ້ຈອງຊື້ຮຸ້ນ ຫຼື ວັນແຈ້ງການກ່ຽວກັບການຍົກເລີກການອອກຈຳໜ່າຍຮຸ້ນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕາມແຕ່ລະກໍລະນີ ທີ່ໄດ້ກຳນົດໄວ້ໃນ ວັກໜຶ່ງ ຂອງມາດຕານີ້ ເປັນຕົ້ນໄປ.

ກໍລະນີ ຖ້າຫາກກາຍກຳນົດເວລາໃນການສົ່ງເງິນມັດຈຳຄືນ ຕາມທີ່ໄດ້ກຳນົດໄວ້ໃນ ວັກສອງ ຂອງມາດຕານີ້ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງຮັບຜິດຊອບຈ່າຍດອກເບ້ຍໃຫ້ແກ່ຜູ້ຈອງຊື້ຮຸ້ນ ຕາມອັດຕາດອກເບ້ຍເງິນຝາກປະຢັດຂອງທະນາຄານຕົວແທນ ຂອງຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ໃນໄລຍະນັ້ນ ຈົນກວ່າຈະສົ່ງເງິນມັດຈຳຄືນໃຫ້ແກ່ຜູ້ຈອງຊື້ຮຸ້ນຄົບຖ້ວນ.

**ມາດຕາ 23 ການອອກໃບຢັ້ງຢືນການຖືຄອງຮຸ້ນ**

ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງອອກໃບຢັ້ງຢືນການຖືຄອງຮຸ້ນ ໃຫ້ແກ່ຜູ້ຊື້ຮຸ້ນ ພາຍໃນເວລາ 5 ວັນ ລັດຖະການ ນັບແຕ່ວັນສິ້ນສຸດການຈອງຊື້ຮຸ້ນ ເປັນຕົ້ນໄປ ເພື່ອຢັ້ງຢືນ ກ່ຽວກັບຈໍານວນຮຸ້ນ ຂອງຜູ້ຊື້ຮຸ້ນທີ່ໄດ້ຮັບຫຼັງການຈັດສັນ.

ໃບຢັ້ງຢືນການຖືຄອງຮຸ້ນ ປະກອບດ້ວຍ ຂໍ້ມູນຕົ້ນຕໍ ດັ່ງນີ້:

1. ຊື່ ແລະ ທີ່ຢູ່ຂອງ ບໍລິສັດອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ;
2. ຊື່, ທີ່ຢູ່ ແລະ ສັນຊາດ ຂອງຜູ້ຊື້ຮຸ້ນ;
3. ໝາຍເລກປະຈໍາຕົວສໍາລັບຜູ້ຊື້ຮຸ້ນ (ໝາຍເລກປະຈໍາຕົວຜູ້ລົງທຶນ) ກໍລະນີ ເປັນຜູ້ລົງທຶນຕ່າງປະເທດ;
4. ເລກບັນຊີຂອງຜູ້ຊື້ຮຸ້ນ;
5. ຈໍານວນຮຸ້ນ ທີ່ຈອງຊື້ທັງໝົດ ແລະ ທີ່ໄດ້ຮັບການແບ່ງປັນ, ມູນຄ່າກໍານົດ ແລະ ລາຄາຮຸ້ນທີ່ອອກຈໍາໜ່າຍ, ມູນຄ່າລວມຂອງຮຸ້ນທີ່ຈອງຊື້, ມູນຄ່າລວມຂອງຮຸ້ນທີ່ໄດ້ຮັບການຈັດສັນ ແລະ ຈໍານວນເງິນມັດຈໍາທີ່ສົ່ງຄືນ;
6. ວັນທີ ອອກໃບຢັ້ງຢືນການຖືຄອງຮຸ້ນ;
7. ລາຍເຊັນ ແລະ ຕາປະທັບຂອງ ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນ.

ກໍລະນີ ມີຫຼາຍບໍລິສັດຫຼັກຊັບ ຮ່ວມກັນຄໍ້າປະກັນການອອກຈໍາໜ່າຍຮຸ້ນ ບໍລິສັດຫຼັກຊັບ ທີ່ເປັນຜູ້ຕາງໜ້າເຮັດສັນຍາຄໍ້າປະກັນການອອກຈໍາໜ່າຍຮຸ້ນ ຕ້ອງເປັນຜູ້ຮັບຜິດຊອບໃນການອອກໃບຢັ້ງຢືນການຖືຄອງຮຸ້ນ ໃຫ້ແກ່ຜູ້ຊື້ຮຸ້ນ.

**ມາດຕາ 24 ການໂອນເງິນທີ່ລະດົມໄດ້ໃຫ້ບໍລິສັດອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ**

ພາຍຫຼັງສໍາເລັດການແບ່ງປັນຮຸ້ນ ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນ ຕ້ອງໂອນເງິນທີ່ລະດົມໄດ້ເຂົ້າໃນບັນຊີເງິນສະເພາະສໍາລັບທຶນທີ່ລະດົມໄດ້ ຂອງບໍລິສັດອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ທີ່ເປີດຢູ່ໃນທະນາຄານທຸລະກິດໃດໜຶ່ງຢູ່ ສປປ ລາວ.

**ມາດຕາ 25 ການລາຍງານ ແລະ ການຢັ້ງຢືນຜົນການອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ**

ການລາຍງານ ແລະ ການຢັ້ງຢືນຜົນການອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 20.

**ມາດຕາ 26 ການນໍາໃຊ້ທຶນທີ່ລະດົມໄດ້**

ການນໍາໃຊ້ທຶນທີ່ລະດົມໄດ້ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍຫຼັກຊັບ (ສະບັບປັບປຸງ) ມາດຕາ 23. ນອກຈາກນັ້ນ, ບໍລິສັດອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ສາມາດນໍາໃຊ້ທຶນທີ່ລະດົມໄດ້ຈາກການອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ພາຍຫຼັງສໍາເລັດການຂຶ້ນທະບຽນເພີ່ມທຶນ ກັບກະຊວງອຸດສາຫະກໍາ ແລະ ການຄ້າ. ກໍລະນີ ອອກຈໍາໜ່າຍຮຸ້ນເພື່ອປັບປຸງໂຄງສ້າງການຖືຮຸ້ນ ບໍລິສັດອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ຈະສາມາດນໍາໃຊ້ທຶນທີ່ລະດົມໄດ້ຈາກການອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ພາຍຫຼັງໄດ້ຮັບການຢັ້ງຢືນຜົນສໍາເລັດການອອກຈໍາໜ່າຍຮຸ້ນດັ່ງກ່າວຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ກໍລະນີ ບໍລິສັດອອກຈໍາໜ່າຍຮຸ້ນ ມີການປ່ຽນແປງຈຸດປະສົງການນໍາໃຊ້ທຶນທີ່ລະດົມໄດ້ ບາງສ່ວນ ຫຼື ທັງໝົດ ຕາມທີ່ໄດ້ກໍານົດໄວ້ໃນໜັງສືຊວນຊື້ ຕ້ອງໄດ້ຮັບການເຫັນດີຈາກກອງປະຊຸມຜູ້ຖືຮຸ້ນ ເສຍກ່ອນ.

**ມາດຕາ 27 ສ່ວນເພີ່ມມູນຄ່າຮຸ້ນ**

ສ່ວນເພີ່ມມູນຄ່າຮຸ້ນ ຂອງບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ທີ່ໄດ້ຈາກການອອກຈຳໜ່າຍຮຸ້ນ ໃຫ້ປະຕິບັດຕາມກໍລະນີ ດັ່ງນີ້:

1. ສ່ວນເພີ່ມມູນຄ່າຮຸ້ນ ທີ່ໄດ້ຈາກການອອກຈຳໜ່າຍຮຸ້ນ ເພື່ອປັບປຸງໂຄງສ້າງການຖືຮຸ້ນ ຈະຕົກເປັນຂອງຜູ້ຖືຮຸ້ນເດີມ ພາຍຫຼັງຫັກຄ່າໃຊ້ຈ່າຍຕ່າງໆທີ່ຕິດພັນກັບການອອກຈຳໜ່າຍຮຸ້ນ;
2. ສ່ວນເພີ່ມມູນຄ່າຮຸ້ນ ທີ່ໄດ້ຈາກການອອກຈຳໜ່າຍຮຸ້ນ ເພື່ອເພີ່ມທຶນ ຈະຕົກເປັນຂອງບໍລິສັດ ພາຍຫຼັງຫັກຄ່າໃຊ້ຈ່າຍຕ່າງໆທີ່ຕິດພັນກັບການອອກຈຳໜ່າຍຮຸ້ນ.

ສ່ວນເພີ່ມມູນຄ່າຮຸ້ນຂອງບໍລິສັດ ຕ້ອງສ້າງເປັນຄັງສະເພາະສ່ວນເພີ່ມມູນຄ່າຮຸ້ນ ຂອງບໍລິສັດ ແລະ ສາມາດນຳໃຊ້ ເພື່ອຂະຫຍາຍກິດຈະການ ຫຼື ເພີ່ມທຶນຈົດທະບຽນ ເທົ່ານັ້ນ ໂດຍຜ່ານການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ. ຊຶ່ງບໍ່ອະນຸຍາດໃຫ້ນຳໃຊ້ ຄັງສະເພາະສ່ວນເພີ່ມມູນຄ່າຮຸ້ນນີ້ ເພື່ອຈ່າຍຖົມຊຸມການຂາດທຶນຂອງບໍລິສັດອອກຈຳໜ່າຍຮຸ້ນ.

**ມາດຕາ 28 ການລາຍງານກ່ຽວກັບການນຳໃຊ້ທຶນທີ່ລະດົມໄດ້**

ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງລາຍງານກ່ຽວກັບການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໂດຍຜ່ານການຢັ້ງຢືນຈາກທີ່ປຶກສາດ້ານການເງິນ ພາຍໃນເວລາ 30 ວັນ ນັບແຕ່ວັນສິ້ນສຸດໄຕມາດ ເປັນຕົ້ນໄປ ຈົນກວ່າຈະນຳໃຊ້ທຶນດັ່ງກ່າວໝົດ.

**ມາດຕາ 29 ການໂຈະການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ**

ການໂຈະການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 21. ນອກຈາກນັ້ນ, ສຳນັກງານຄະນະກາມະການຄຸ້ມຄອງຫຼັກຊັບ ມີສິດສັ່ງໂຈະການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ເປັນເວລາສູງສຸດ 60 ວັນ ກໍລະນີ ການສະໜອງຂໍ້ມູນບໍ່ຖືກຕ້ອງ ຫຼື ບໍ່ປະຕິບັດຕາມຂັ້ນຕອນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 17 ຂອງຂໍ້ຕົກລົງສະບັບນີ້ ທີ່ສົ່ງ ຫຼື ອາດຈະສົ່ງ ຜົນເສຍຫາຍຕໍ່ຜູ້ລົງທຶນ.

ກໍລະນີ ຖືກສັ່ງໂຈະ ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງເປີດເຜີຍຂໍ້ມູນກ່ຽວກັບການຖືກສັ່ງໂຈະດັ່ງກ່າວໃຫ້ມວນຊົນຊາບ ຜ່ານໃນເວັບໄຊຂອງຕະຫຼາດຫຼັກຊັບ, ເວັບໄຊຂອງບໍລິສັດ ແລະ ພາຫະນະສື່ມວນຊົນອື່ນ ພາຍໃນເວລາ 5 ວັນ ລັດຖະການ ຕໍ່ເນື່ອງ ນັບແຕ່ວັນໄດ້ຮັບແຈ້ງການກ່ຽວກັບການໂຈະການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ.

ພາຍຫຼັງ ແກ້ໄຂສາເຫດຂອງການສັ່ງໂຈະໄດ້ແລ້ວ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງອອກແຈ້ງການຍົກເລີກການສັ່ງໂຈະດັ່ງກ່າວ ແລະ ອະນຸຍາດໃຫ້ສາມາດດຳເນີນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕໍ່ໄປໄດ້ຕາມຈຳນວນວັນທີ່ຍັງເຫຼືອທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ. ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງເປີດເຜີຍຂໍ້ມູນກ່ຽວກັບການຍົກເລີກການສັ່ງໂຈະດັ່ງກ່າວຜ່ານເວັບໄຊ ຂອງຕະຫຼາດຫຼັກຊັບ ແລະ ເວັບໄຊຂອງບໍລິສັດ ພ້ອມທັງ ປະກາດໃຫ້ມວນຊົນຊາບ ຜ່ານພາຫະນະສື່ມວນຊົນ ຢ່າງໜ້ອຍ 5 ວັນ ລັດຖະການຕໍ່ເນື່ອງ ນັບແຕ່ວັນໄດ້ຮັບແຈ້ງການກ່ຽວກັບການຍົກເລີກການສັ່ງໂຈະ ເປັນຕົ້ນໄປ.

**ມາດຕາ 30 ການຍົກເລີກການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ**

ການຍົກເລີກການອອກຈຳໜ່າຍຮຸ້ນ ແມ່ນປະຕິບັດຕາມການກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 22. ນອກຈາກນັ້ນ, ຈະຖືກຍົກເລີກການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ໃນກໍລະນີ ດັ່ງນີ້:

1. ບໍ່ສາມາດແກ້ໄຂສາເຫດທີ່ຖືກສັ່ງໂຈະໄດ້ ພາຍໃນເວລາ 60 ວັນ ນັບແຕ່ວັນຖືກໂຈະເປັນຕົ້ນໄປ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 29 ຂອງຂໍ້ຕົກລົງສະບັບນີ້;
2. ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ສະເໜີຍົກເລີກການອອກຈຳໜ່າຍຮຸ້ນ ຕາມມະຕິຂອງກອງປະຊຸມຜູ້ຖືຮຸ້ນ;
3. ຕາມຄຳສັ່ງ ຫຼື ຄຳຕັດສິນ ຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດ;
4. ກໍລະນີອື່ນໆ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ພາຍໃນເວລາ 5 ວັນ ລັດຖະການ ພາຍຫຼັງໄດ້ຮັບແຈ້ງການກ່ຽວກັບການຍົກເລີກການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ. ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງເປີດເຜີຍຂໍ້ມູນກ່ຽວກັບການຍົກເລີກດັ່ງກ່າວ ຜ່ານເວັບໄຊຂອງຕະຫຼາດຫຼັກຊັບ ແລະ ເວັບໄຊຂອງບໍລິສັດ ພ້ອມທັງ ປະກາດໃຫ້ມວນຊົນຊາບ ຜ່ານພາຫະນະສື່ມວນຊົນ ພາຍໃນເວລາຢ່າງໜ້ອຍ 5 ວັນ ລັດຖະການຕໍ່ເນື່ອງ.

**ມາດຕາ 31 ການອອກຈຳໜ່າຍຮຸ້ນໃຫ້ແກ່ ສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານຂອງບໍລິສັດ**

ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງມີມະຕິຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ກ່ຽວກັບແຜນ ການອອກຈຳໜ່າຍຮຸ້ນໃຫ້ແກ່ ສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານຂອງບໍລິສັດ ແລະ ບໍ່ເກີນ ສິບສ່ວນຮ້ອຍ (10%) ຂອງຈຳນວນຮຸ້ນທັງໝົດທີ່ສະເໜີອອກຈຳໜ່າຍໃຫ້ແກ່ມວນຊົນ ຊຶ່ງແຜນການອອກຈຳໜ່າຍຮຸ້ນໃຫ້ແກ່ເປົ້າໝາຍດັ່ງກ່າວ ຕ້ອງກຳນົດແຈ້ງ ກ່ຽວກັບຈຳນວນຮຸ້ນ, ລາຄາຂາຍ, ວິທີການຈັດສັນຮຸ້ນ ແລະ ເງື່ອນໄຂຂອງເປົ້າໝາຍທີ່ມີສິດໃນການຈອງຊື້ຮຸ້ນ ແລະ ຕ້ອງສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງ.

ໄລຍະເວລາການຖືຄອງຮຸ້ນຂອງ ສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານຂອງບໍລິສັດດັ່ງກ່າວ ຕ້ອງບໍ່ຕໍ່າກວ່າ 1 ປີ ຈຶ່ງສາມາດຂາຍໄດ້.

**ມາດຕາ 32 ການອອກຈຳໜ່າຍຮຸ້ນເດີມພ້ອມກັບການອອກຈຳໜ່າຍຮຸ້ນເພີ່ມທຶນໃຫ້ແກ່ມວນຊົນ**

ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງມີມະຕິຮັບຮອງ ກ່ຽວກັບແຜນການອອກຈຳໜ່າຍຮຸ້ນເດີມພ້ອມກັບການອອກຈຳໜ່າຍຮຸ້ນເພີ່ມທຶນໃຫ້ແກ່ມວນຊົນ ຈາກກອງປະຊຸມຜູ້ຖືຮຸ້ນ ແລະ ແຜນດັ່ງກ່າວຕ້ອງມີເນື້ອໃນກ່ຽວກັບ ຈຳນວນຮຸ້ນທີ່ສະເໜີອອກຈຳໜ່າຍ, ວິທີການແບ່ງຄວາມຮັບຜິດຊອບຕໍ່ຄ່າໃຊ້ຈ່າຍທີ່ຕິດພັນກັບການອອກຈຳໜ່າຍຮຸ້ນ ລະຫວ່າງ ບໍລິສັດອອກຈຳໜ່າຍຮຸ້ນ ແລະ ຜູ້ຖືຮຸ້ນເດີມ ແລະ ອື່ນໆ.

ການອອກຈຳໜ່າຍຮຸ້ນຂອງຜູ້ຖືຮຸ້ນເດີມ ຕ້ອງບໍ່ສົ່ງຜົນກະທົບຕໍ່ການຄຸ້ມຄອງບໍລິຫານ, ການເຄື່ອນໄຫວກິດຈະການ ແລະ ຜົນການດຳເນີນງານຂອງບໍລິສັດ.

**ມາດຕາ (ໃໝ່) 33 ການສະເໜີຈົດທະບຽນຮຸ້ນໃນຕະຫຼາດຫຼັກຊັບລາວ**

ພາຍຫຼັງທີ່ ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ໄດ້ຮັບໜັງສືຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນ ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລ້ວ ຕ້ອງສະເໜີຕໍ່ ຕະຫຼາດຫຼັກຊັບລາວ ເພື່ອຂໍ

ຈົດທະບຽນໃນ ກະດານການຊື້ ຂາຍຫຼັກຊັບຕະຫຼາດຫຼັກຊັບລາວ ຫຼື ກະດານການຊື້ ຂາຍຮຸ້ນສໍາລັບວິສາຫະກິດຂະໜາດນ້ອຍ ແລະ ກາງ ຕາມເງື່ອນໄຂທີ່ໄດ້ກໍານົດໄວ້ໃນ ລະບຽບການຈົດທະບຽນຮຸ້ນຂອງ ຕະຫຼາດຫຼັກຊັບລາວ ກໍານົດ.

ບໍລິສັດອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ທີ່ໄດ້ຈົດທະບຽນຮຸ້ນໃນກະດານການຊື້ ຂາຍຮຸ້ນສໍາລັບວິສາຫະກິດຂະໜາດນ້ອຍ ແລະ ກາງ ບໍລິສັດດັ່ງກ່າວຕ້ອງໄດ້ສ້າງເງື່ອນໄຂ ແລະ ກະກຽມຄວາມພ້ອມຮອບດ້ານພາຍໃນເວລາ 5 ປີ ນັບແຕ່ວັນຈົດທະບຽນຮຸ້ນໃນກະດານການຊື້ ຂາຍຮຸ້ນສໍາລັບວິສາຫະກິດຂະໜາດນ້ອຍ ແລະ ກາງ ເປັນຕົ້ນໄປ ຖ້າຄົບເງື່ອນໄຂຕາມລະບຽບການຂອງ ຕະຫຼາດຫຼັກຊັບລາວ ກໍານົດໄວ້ແລ້ວ ແມ່ນໃຫ້ບໍລິສັດດັ່ງກ່າວ ປ່ຽນໄປຈົດທະບຽນຮຸ້ນຂອງຕົນ ໃນກະດານການຊື້ ຂາຍຫຼັກຊັບຕະຫຼາດຫຼັກຊັບລາວ.

ກໍລະນີ ບໍລິສັດຄົບເງື່ອນໄຂຈົດທະບຽນ ຕາມລະບຽບການຂອງ ຕະຫຼາດຫຼັກຊັບລາວ ກໍານົດໄວ້ແລ້ວ ແຕ່ຍັງບໍ່ປ່ຽນໄປຈົດທະບຽນຮຸ້ນຂອງຕົນໃນກະດານການຊື້ ຂາຍຫຼັກຊັບຕະຫຼາດຫຼັກຊັບລາວ ຈະຕ້ອງໄປຕິບັດຕາມລະບຽບຄືກັບບໍລິສັດທີ່ຈົດທະບຽນໃນກະດານການຊື້ ຂາຍຫຼັກຊັບຕະຫຼາດຫຼັກຊັບລາວ.

## ໝວດທີ 3
## ການອອກຈໍາໜ່າຍຮຸ້ນໃນວົງຈໍາກັດ

### ມາດຕາ 34 ການອອກຈໍາໜ່າຍຮຸ້ນໃນວົງຈໍາກັດ

ການອອກຈໍາໜ່າຍຮຸ້ນໃນວົງຈໍາກັດ ແມ່ນການອອກຈໍາໜ່າຍຮຸ້ນໃຫ້ແກ່ ຜູ້ລົງທຶນ ທີ່ມີຄວາມຮູ້ຄວາມສາມາດ, ປະສົບການກ່ຽວກັບກິດຈະການຂອງບໍລິສັດອອກຈໍາໜ່າຍຮຸ້ນ ຫຼື ບໍລິສັດຈົດທະບຽນ, ຜູ້ລົງທຶນປະເພດສະຖາບັນ ແລະ ຜູ້ລົງທຶນລາຍໃຫຍ່.

ການອອກຈໍາໜ່າຍຮຸ້ນໃນວົງຈໍາກັດ ເປັນການອອກຈໍາໜ່າຍຮຸ້ນໃຫ້ຜູ້ລົງທຶນໃນວົງແຄບ ມີຈໍານວນຜູ້ຖືຮຸ້ນລວມກັນທັງໝົດ ນັບແຕ່ ຮ້ອຍລາຍ ລົງມາ ແລະ ມີມູນຄ່າທຶນທີ່ຕ້ອງການລະດົມລວມກັນທັງໝົດ ບໍ່ເກີນ ຮ້ອຍຕື້ກີບ ໃນໄລຍະເວລາ 1 ປີ.

### ມາດຕາ 35 ເງື່ອນໄຂການອອກຈໍາໜ່າຍຮຸ້ນໃນວົງຈໍາກັດ

ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນໃນວົງຈໍາກັດ ຕ້ອງມີເງື່ອນໄຂຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 13. ແລະ ຂໍ້ຕົກລົງສະບັບນີ້ໃນ ມາດຕາ 7 ຂໍ້ 2, 3 ແລະ 9. ນອກຈາກນັ້ນ, ຍັງມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ສ້າງຕັ້ງ ແລະ ເຄື່ອນໄຫວມາແລ້ວຢ່າງໜ້ອຍ 1 ປີ ຍົກເວັ້ນກໍລະນີ ບໍລິສັດມີການ ແຍກ, ຄວບ ຫຼື ຫັນເປັນບໍລິສັດຮູບແບບໃໝ່;
2. ມີເອກະສານລາຍງານການເງິນ 1 ປີ ຄືນຫຼັງ ນັບແຕ່ປີຍື່ນຄໍາຮ້ອງ ແລະ ເອກະສານປະກອບການຮ້ອງຂໍອອກຈໍາໜ່າຍຮຸ້ນໃນວົງຈໍາກັດ ໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ຊຶ່ງໄດ້ຮັບການກວດສອບຈາກບໍລິສັດກວດສອບ;
3. ມີການຢັ້ງຢືນຄວາມພ້ອມ ການອອກຈໍາໜ່າຍຮຸ້ນໃນວົງຈໍາກັດ ຈາກທີ່ປຶກສາດ້ານການເງິນ ພ້ອມດ້ວຍລາຍຊື່ທີມງານທີ່ຮັບຜິດຊອບເປັນທີ່ປຶກສາດ້ານການເງິນ;
4. ມີເງື່ອນໄຂອື່ນຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 36 ເອກະສານປະກອບການຮ້ອງຂໍອອກຈໍາໜ່າຍຮຸ້ນໃນວົງຈໍາກັດ**

ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນໃນວົງຈໍາກັດ ຕ້ອງຍື່ນຄໍາຮ້ອງ ແລະ ເອກະສານປະກອບ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 14 ແລະ ຂໍ້ຕົກລົງສະບັບນີ້ໃນ ມາດຕາ 8 ຂໍ້ 1, 3, 4 ແລະ 7. ນອກຈາກນັ້ນ, ຍັງປະກອບເອກະສານເພີ່ມເຕີມ ດັ່ງນີ້:

1. ໃບຢັ້ງຢືນຄວາມພ້ອມ ການອອກຈໍາໜ່າຍຮຸ້ນໃນວົງຈໍາກັດຈາກ ທີ່ປຶກສາດ້ານການເງິນ;
2. ເອກະສານລາຍງານການເງິນ 1 ປີຄືນຫຼັງ ນັບແຕ່ປີຍື່ນຄໍາຮ້ອງ ແລະ ເອກະສານປະກອບການຮ້ອງຂໍອອກຈໍາໜ່າຍຮຸ້ນໃນວົງຈໍາກັດ ໃຫ້ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ຊຶ່ງໄດ້ຮັບການກວດສອບຈາກບໍລິສັດກວດສອບ;
3. ໜັງສືຊວນຊື້ສະບັບຫຍໍ້ (Factsheet) ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
4. ເອກະສານອື່ນຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນໃນວົງຈໍາກັດ ຕ້ອງຮ່ວມກັບ ທີ່ປຶກສາດ້ານການເງິນ ເປັນຜູ້ກະກຽມເອກະສານປະກອບການຮ້ອງຂໍອອກຈໍາໜ່າຍຮຸ້ນໃນວົງຈໍາກັດໃນແຕ່ລະຄັ້ງ, ຕ້ອງຮັບຜິດຊອບຕໍ່ເນື້ອໃນ ແລະ ຂໍ້ມູນທີ່ບົ່ງໄວ້ໃນເອກະສານດັ່ງກ່າວ ພ້ອມທັງ ເກັບຮັກສາເອກະສານປະຕິບັດງານ ທີ່ກ່ຽວຂ້ອງດັ່ງກ່າວໄວ້ຢ່າງໜ້ອຍ 10 ປີ ນັບແຕ່ສໍາເລັດການອອກຈໍາໜ່າຍຮຸ້ນໃນວົງຈໍາກັດ ເປັນຕົ້ນໄປ.

**ມາດຕາ 37 ຂັ້ນຕອນການອອກຈໍາໜ່າຍຮຸ້ນໃນວົງຈໍາກັດ**

ພາຍຫຼັງໄດ້ຮັບອະນຸຍາດ ຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໃຫ້ອອກຈໍາໜ່າຍຮຸ້ນໃນວົງຈໍາກັດ ຕ້ອງປະຕິບັດຕາມ ທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 19 ຂໍ້ 2, 3, 4, 5 ແລະ 6.

ການອອກຈໍາໜ່າຍຮຸ້ນໃນວົງຈໍາກັດ ຕ້ອງໃຫ້ສໍາເລັດ ພາຍໃນເວລາ 90 ວັນ ນັບແຕ່ວັນໄດ້ຮັບອະນຸຍາດໃຫ້ອອກຈໍາໜ່າຍຮຸ້ນເປັນຕົ້ນໄປ. ກໍລະນີ ການອອກຈໍາໜ່າຍຮຸ້ນໃນວົງຈໍາກັດ ບໍ່ສໍາເລັດ ຕາມກໍານົດເວລາດັ່ງກ່າວ ບໍລິສັດອອກຈໍາໜ່າຍຮຸ້ນໃນວົງຈໍາກັດ ສາມາດສະເໜີຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເພື່ອເພີ່ມເວລາອອກຈໍາໜ່າຍຕື່ມອີກກໍໄດ້ ແຕ່ບໍ່ໃຫ້ເກີນ 30 ວັນ ແລະ ຕ້ອງສະເໜີມາຍັງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຢ່າງໜ້ອຍ 3 ວັນ ລັດຖະການ ກ່ອນວັນສິ້ນສຸດກໍານົດເວລາດັ່ງກ່າວ.

ບໍລິສັດອອກຈໍາໜ່າຍຮຸ້ນໃນວົງຈໍາກັດ ມີໜ້າທີ່ສ້າງກົນໄກ ໃນການຈອງຊື້ຮຸ້ນ ແລະ ວາງເງິນມັດຈໍາ, ການຈັດສັນຮຸ້ນ, ການສົ່ງເງິນມັດຈໍາຄືນ, ການອອກໃບຢັ້ງຢືນການຈັດສັນຮຸ້ນ.

**ມາດຕາ 38 ການນໍາໃຊ້ບົດບັນຍັດຂອງການອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ສໍາລັບການອອກຈໍາໜ່າຍຮຸ້ນໃນວົງຈໍາກັດ.**

ນອກຈາກບົດບັນຍັດຕ່າງໆ ທີ່ໄດ້ກໍານົດໄວ້ໃນໝວດນີ້ ໃບຢັ້ງຢືນຄວາມພ້ອມການອອກຈໍາໜ່າຍຮຸ້ນ, ການກວດກາເບື້ອງຕົ້ນເອກະສານການຂໍອອກຈໍາໜ່າຍຮຸ້ນ, ການພິຈາລະນາການຂໍອອກຈໍາໜ່າຍຮຸ້ນ, ການກໍານົດລາຄາຮຸ້ນ, ການຈອງຊື້ຮຸ້ນ ແລະ ວາງເງິນມັດຈໍາ, ການຈັດສັນຮຸ້ນ, ການສົ່ງເງິນມັດຈໍາຄືນ, ການອອກໃບຢັ້ງຢືນການຖືຄອງຮຸ້ນ, ການລາຍງານ ແລະ ການຢັ້ງຢືນຜົນການອອກຈໍາໜ່າຍຮຸ້ນ, ການນໍາໃຊ້ທຶນທີ່ລະດົມໄດ້, ສ່ວນເພີ່ມມູນຄ່າຮຸ້ນ, ການລາຍງານກ່ຽວກັບການນໍາໃຊ້ທຶນທີ່ລະດົມໄດ້, ການໂຈະການອອກຈໍາໜ່າຍຮຸ້ນ ແລະ ການຍົກເລີກການອອກຈໍາໜ່າຍຮຸ້ນ ກ່ຽວກັບການອອກຈໍາໜ່າຍຮຸ້ນໃນວົງຈໍາກັດ ໃຫ້ປະຕິບັດຕາມ

ບິດບັນຍັດຂອງ ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕາມທີ່ໄດ້ກຳນົດໄວ້ໃນ ໝວດທີ 2 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 4
## ການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ

**ມາດຕາ 39 ການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ**

ການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແມ່ນການອອກຈຳໜ່າຍຮຸ້ນ ຂອງບໍລິສັດອອກຈຳໜ່າຍຮຸ້ນ ຫຼື ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ໂດຍການໃຫ້ບູລິມະສິດແກ່ຜູ້ຖືຮຸ້ນເດີມໃນການຊື້ຮຸ້ນ ຕາມມະຕິຂອງກອງປະຊຸມຜູ້ຖືຮຸ້ນ.

**ມາດຕາ 40 ເງື່ອນໄຂການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 13 ແລະ ຂໍ້ຕົກລົງສະບັບນີ້ ໃນມາດຕາ 7 ຂໍ້ 7 ແລະ 9. ແລະ ເງື່ອນໄຂອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 41 ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃນວົງຈຳກັດ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 14 ແລະ ຂໍ້ຕົກລົງສະບັບນີ້ ໃນມາດຕາ 8 ຂໍ້ 3, 5 ແລະ 7. ນອກຈາກນັ້ນ, ຍັງມີເອກະສານເພີ່ມເຕີມ ດັ່ງນີ້:

1. ມະຕິກອງປະຊຸມຜູ້ຖືຮຸ້ນ ກ່ຽວກັບຮັບຮອງແຜນການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ຊຶ່ງຕ້ອງປະກອບມີເນື້ອໃນເປັນຕົ້ນ ເປົ້າໝາຍຜູ້ລົງທຶນ, ຈຳນວນຮຸ້ນ, ປະເພດຮຸ້ນ, ອັດຕາສ່ວນ ແລະ ວິທີການຈັດສັນ, ຮູບແບບການອອກຈຳໜ່າຍ, ແຜນການນຳໃຊ້ທຶນ ແລະ ການມອບສິດແກ່ສະພາບໍລິຫານໃນການຕັດສິນໃຈແທນຜູ້ຖືຮຸ້ນໃນການດຳເນີນການອອກຈຳໜ່າຍຮຸ້ນ (ຖ້າມີ) ແລະ ອື່ນໆ ຊຶ່ງມະຕິດັ່ງກ່າວ ຕ້ອງເປັນມະຕິທີ່ມີຜົນບັງຄັບໃຊ້ຕາມກົດໝາຍ;
2. ໜັງສືຊວນຊື້ສະບັບຫຍໍ້ (Factsheet) ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
3. ເອກະສານອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ຕ້ອງຮ່ວມກັບ ທີ່ປຶກສາດ້ານການເງິນເປັນຜູ້ກະກຽມເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມໃນແຕ່ລະຄັ້ງ, ຕ້ອງຮັບຜິດຊອບຕໍ່ເນື້ອໃນ ແລະ ຂໍ້ມູນທີ່ບົ່ງໄວ້ໃນເອກະສານດັ່ງກ່າວ ພ້ອມທັງ ເກັບຮັກສາເອກະສານປະຕິບັດງານທີ່ກ່ຽວຂ້ອງດັ່ງກ່າວໄວ້ຢ່າງໜ້ອຍ 10 ປີ ນັບແຕ່ສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ເປັນຕົ້ນໄປ.

**ມາດຕາ 42 ການນຳໃຊ້ບົດບັນຍັດຂອງການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ສຳລັບການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ**

ນອກຈາກບົດບັນຍັດຕ່າງໆ ທີ່ໄດ້ກຳນົດໄວ້ໃນໝວດນີ້ ໃບຢັ້ງຢືນຄວາມພ້ອມການອອກຈຳໜ່າຍຮຸ້ນ, ສັນຍາຄ້ຳປະກັນການອອກຈຳໜ່າຍຮຸ້ນ, ການກວດກາເບື້ອງຕົ້ນເອກະສານການຂໍອອກຈຳໜ່າຍຮຸ້ນ, ການພິຈາລະນາການຂໍອອກຈຳໜ່າຍຮຸ້ນ, ການເປີດເຜີຍຂໍ້ມູນກ່ຽວກັບແຜນການອອກຈຳໜ່າຍຮຸ້ນ, ການກຳນົດລາຄາຮຸ້ນ, ຂັ້ນຕອນການອອກຈຳໜ່າຍຮຸ້ນ, ການປະກາດກ່ຽວກັບການອະນຸຍາດໃຫ້ອອກຈຳໜ່າຍຮຸ້ນ, ການໂຄສະນາອອກຈຳໜ່າຍຮຸ້ນຜ່ານພາຫະນະສື່ມວນຊົນ, ການຈອງຊື້ຮຸ້ນ ແລະ ວາງເງິນມັດຈຳ, ການຈັດສັນຮຸ້ນ, ການສົ່ງເງິນມັດຈຳຄືນ, ການອອກໃບຢັ້ງຢືນການຖືຄອງຮຸ້ນ, ການໂອນເງິນທີ່ລະດົມໄດ້, ການລາຍງານ ແລະ ການຢັ້ງຢືນຜົນການອອກຈຳໜ່າຍຮຸ້ນ, ການນຳໃຊ້ທຶນທີ່ລະດົມໄດ້, ສ່ວນເພີ່ມມູນຄ່າຮຸ້ນ, ການລາຍງານກ່ຽວກັບການນຳໃຊ້ທຶນທີ່ລະດົມໄດ້, ການໂຈະການອອກຈຳໜ່າຍຮຸ້ນ ແລະ ການຍົກເລີກການອອກຈຳໜ່າຍຮຸ້ນກ່ຽວກັບການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ໃຫ້ປະຕິບັດຕາມບົດບັນຍັດຂອງ ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕາມທີ່ໄດ້ກຳນົດໄວ້ໃນ ໝວດທີ 2 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 5
## ຄ່າບໍລິການການອອກຈຳໜ່າຍຮຸ້ນ ແລະ ຂໍ້ຫ້າມ

**ມາດຕາ 43 (ປັບປຸງ) ຄ່າບໍລິການການອອກຈຳໜ່າຍຮຸ້ນ**

ຄ່າບໍລິການການອອກຈຳໜ່າຍຮຸ້ນ ປະກອບມີ ດັ່ງນີ້:

1. ຄ່າຍື່ນຄຳຮ້ອງຂໍອອກຈຳໜ່າຍຮຸ້ນ ຈຳນວນ 15.000.000 ກີບ ຕໍ່ຄັ້ງ;
2. ຄ່າໃບອະນຸຍາດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ສູນຈຸດສູນສາມສ່ວນຮ້ອຍ (0,03%) ຂອງມູນຄ່າຮຸ້ນທີ່ຂໍອອກຈຳໜ່າຍ ແຕ່ບໍ່ໃຫ້ຕ່ຳກວ່າ 30.000.000 ກີບ;
3. ຄ່າໃບອະນຸຍາດອອກຈຳໜ່າຍຮຸ້ນໃນວົງຈຳກັດ ສູນຈຸດສູນສອງສ່ວນຮ້ອຍ (0,02%) ຂອງມູນຄ່າຮຸ້ນທີ່ຂໍອອກຈຳໜ່າຍ ແຕ່ບໍ່ໃຫ້ຕ່ຳກວ່າ 30.000.000 ກີບ;
4. ຄ່າໃບອະນຸຍາດອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ສູນຈຸດສູນສອງສ່ວນຮ້ອຍ (0,02%) ຂອງມູນຄ່າຮຸ້ນທີ່ຂໍອອກຈຳໜ່າຍ ແຕ່ບໍ່ໃຫ້ຕ່ຳກວ່າ 30.000.000 ກີບ;
5. ຄ່າຄຸ້ມຄອງປະຈຳປີ ຈຳນວນ 10.000.000 ກີບ ຍົກເວັ້ນ ປີທີ່ອອກຈຳໜ່າຍຮຸ້ນຄັ້ງທຳອິດ.

ຄ່າບໍລິການໃນການອອກຈຳໜ່າຍຮຸ້ນຂອງ ວິສາຫະກິດຂະໜາດນ້ອຍ ແລະ ກາງ ປະກອບມີ ດັ່ງນີ້:

1. ຄ່າຍື່ນຄຳຮ້ອງຂໍອອກຈຳໜ່າຍຮຸ້ນ ຈຳນວນ 8.000.000 ກີບ ຕໍ່ຄັ້ງ;
2. ຄ່າໃບອະນຸຍາດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ສູນຈຸດສູນສອງສ່ວນຮ້ອຍ (0,02%) ຂອງມູນຄ່າຮຸ້ນທີ່ອອກຈຳໜ່າຍ ແຕ່ບໍ່ໃຫ້ຕ່ຳກວ່າ 15.000.000 ກີບ;
3. ຄ່າໃບອະນຸຍາດອອກຈຳໜ່າຍຮຸ້ນໃນວົງຈຳກັດ ສູນຈຸດສູນໜຶ່ງສ່ວນຮ້ອຍ (0,01%) ຂອງມູນຄ່າຮຸ້ນທີ່ອອກຈຳໜ່າຍ ແຕ່ບໍ່ໃຫ້ຕ່ຳກວ່າ 15.000.000 ກີບ;
4. ຄ່າໃບອະນຸຍາດອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ສູນຈຸດສູນໜຶ່ງສ່ວນຮ້ອຍ (0,01%) ຂອງມູນຄ່າຮຸ້ນທີ່ອອກຈຳໜ່າຍ ແຕ່ບໍ່ໃຫ້ຕ່ຳກວ່າ 15.000.000 ກີບ;
5. ຄ່າຄຸ້ມຄອງປະຈຳປີ ຈຳນວນ 5.000.000 ກີບ ຍົກເວັ້ນ ປີທີ່ອອກຈຳໜ່າຍຮຸ້ນຄັ້ງທຳອິດ.

ວິສາຫະກິດຂະໜາດນ້ອຍ ແລະ ກາງ ນັບແຕ່ ວັນທີແຈ້ງການສະບັບນີ້ໄດ້ຮັບຮອງເປັນຕົ້ນໄປ ເຖິງເດືອນ ທັນວາ ປີ 2025 ແມ່ນຈະໄດ້ຮັບການຍົກເວັ້ນຄ່າໃບອະນຸຍາດອອກຈຳໜ່າຍຮຸ້ນ ຕາມທີ່ໄດ້ກຳນົດໄວ້ໃນ ວັກສອງ ຂໍ້ 2, ຂໍ້ 3 ແລະ ຂໍ້ 4 ຂ້າງເທິງ ນີ້. ສຳລັບ ຄ່າຍື່ນຄຳຮ້ອງ ແລະ ຄ່າຄຸ້ມຄອງປະຈຳປີ ແມ່ນຕ້ອງໄດ້ເສຍປົກກະຕິ.

ນັບແຕ່ປີ 2026 ເປັນຕົ້ນໄປວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ອອກຈຳໜ່າຍຮຸ້ນນັ້ນ ແມ່ນຕ້ອງໄດ້ເສຍຄ່າບໍລິການທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນ ວັກສອງ ແຕ່ ຂໍ້ທີ 1 ເຖິງ ຂໍ້ທີ 5 ຂ້າງເທິງນີ້.

**ມາດຕາ 44 ກຳນົດເວລາການຊຳລະຄ່າບໍລິການ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ ແລະ ບໍລິສັດອອກຈຳໜ່າຍຮຸ້ນ ຕ້ອງປະຕິບັດຄ່າບໍລິການໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ ຕ້ອງຊຳລະຄ່າຍື່ນຄຳຮ້ອງຂໍອອກຈຳໜ່າຍຮຸ້ນ ໃຫ້ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພາຍໃນວັນທີ່ຍື່ນຄຳຮ້ອງ.

2. ບໍລິສັດອອກຈຳໜ່າຍຮຸ້ນ ຕ້ອງຊຳລະຄ່າບໍລິການໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

2.1 ຄ່າໃບອະນຸຍາດການອອກຈຳໜ່າຍຮຸ້ນໃນແຕ່ລະຄັ້ງ ພາຍໃນເວລາ 30 ວັນ ນັບແຕ່ວັນສິ້ນສຸດການອອກຈຳໜ່າຍຮຸ້ນ ເປັນຕົ້ນໄປ;

2.2 ຄ່າຄຸ້ມຄອງປະຈຳປີ ພາຍໃນໄຕມາດທີໜຶ່ງ ຂອງທຸກໆປີ.

**ມາດຕາ 45 ຂໍ້ຫ້າມ**

ການອອກຈຳໜ່າຍຮຸ້ນ ມີຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 172. ນອກຈາກນັ້ນ, ມີຂໍ້ຫ້າມເພີ່ມເຕີມ ດັ່ງນີ້:

1. ມີການຢັ້ງຢືນຄວາມພ້ອມການອອກຈຳໜ່າຍຮຸ້ນຈາກ ບໍລິສັດຫຼັກຊັບທີ່ດຳເນີນທຸລະກິດຫຼັກຊັບເປັນທີ່ປຶກສາດ້ານການເງິນ ແລະ ຜູ້ຄໍ້າປະກັນການອອກຈຳໜ່າຍ ທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ;

2. ຊື້ ຂາຍ ຫຼື ໂອນ ຮຸ້ນທີ່ອອກຈຳໜ່າຍໃນວົງຈຳກັດ ພາຍໃນເວລາ 1 ປີ ນັບແຕ່ວັນສຳເລັດການອອກຈຳໜ່າຍຮຸ້ນໃນວົງຈຳກັດ ເປັນຕົ້ນໄປ;

3. ນຳໃຊ້ຄັງສະເພາະສ່ວນເພີ່ມມູນຄ່າຮຸ້ນເຂົ້າໃນເປົ້າໝາຍອື່ນ ທີ່ບໍ່ສອດຄ່ອງກັບທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

4. ລາຍງານຊັກຊ້າ, ລາຍງານບໍ່ຖືກຕ້ອງ ຫຼື ບໍ່ລາຍງານ ຕາມຄວາມເປັນຈິງ ກ່ຽວກັບການນຳໃຊ້ທຶນທີ່ລະດົມໄດ້ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 46 ນະໂຍບາຍຕໍ່ຜູ້ມີຜົນງານ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ, ບໍລິສັດອອກຈຳໜ່າຍຮຸ້ນ, ບໍລິສັດຫຼັກຊັບ, ບໍລິສັດກວດສອບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການອອກຈຳໜ່າຍຮຸ້ນຢູ່ ສປປ ລາວ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ ຫຼື ນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 47 ມາດຕະການຕໍ່ຜູ້ລະເມີດ**

ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນ, ບໍລິສັດອອກຈໍາໜ່າຍຮຸ້ນ, ບໍລິສັດຫຼັກຊັບ, ບໍລິສັດກວດສອບ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກັບການອອກຈໍາໜ່າຍຮຸ້ນຢູ່ ສປປ ລາວ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ, ປັບໃໝ ແລະ ມາດຕະການເພີ່ມເຕີມ ດັ່ງນີ້:

ມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ ແມ່ນໃນກໍລະນີທີ່ມີພຶດຕິກໍາ ຫຼື ການລະເມີດໃນລັກສະນະ ໃດໜຶ່ງ ດັ່ງນີ້:

1. ເປັນການລະເມີດຄັ້ງທໍາອິດ ທີ່ມີລັກສະນະເບົາ ເປັນຕົ້ນ ມີການລາຍງານລ່າຊ້າ, ບໍ່ໃຫ້ການຮ່ວມມືກັບ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ບໍ່ສະໜອງຂໍ້ມູນ ແລະ ເອກະສານ ຕາມການຮຽກຮ້ອງຂອງສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຫຼື ພາກສ່ວນກ່ຽວຂ້ອງ ແລະ ກໍລະນີອື່ນທີ່ການລະເມີດສ້າງຄວາມເສຍຫາຍບໍ່ເກີນ 1.000.000 ກີບ;

2. ການລະເມີດບໍ່ມີການຮ້ອງຟ້ອງ ຫຼື ແຈ້ງຄວາມ ຂອງຜູ້ຖືກເສຍຫາຍ ແລະ ຄູ່ກໍລະນີສາມາດຕົກລົງ ຫຼື ແກ້ໄຂ ຮ່ວມກັນໄດ້;

3. ມີພຶດຕິກໍາທີ່ຂັດກັບຂໍ້ຕົກລົງສະບັບນີ້ ແຕ່ບໍ່ແມ່ນລະເມີດຂໍ້ຫ້າມ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 44 ຂອງຂໍ້ຕົກລົງສະບັບນີ້;

4. ກໍລະນີອື່ນຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ມາດຕະການປັບໃໝ ແມ່ນໃນກໍລະນີທີ່ມີພຶດຕິກໍາ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ການເປັນລະເມີດຄັ້ງທໍາອິດ ທີ່ມີລັກສະນະຮ້າຍແຮງ ຊຶ່ງການລະເມີດສ້າງຄວາມເສຍຫາຍເກີນ 1.000.000 ກີບ, ມີເຈດຕະນາໃນການລະເມີດ, ບໍ່ສະໝັກໃຈ ແຈ້ງ ຫຼື ລາຍງານການລະເມີດຂອງຕົນ, ບໍ່ໃຫ້ການ ຮ່ວມມືກ່ຽວກັບການລະເມີດຂອງຕົນ ຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບຈະຖືກປັບໃໝ ຈໍານວນ ສອງເທົ່າ ຂອງມູນຄ່າຄວາມເສຍຫາຍທີ່ເກີດຈາກການລະເມີດຂອງຕົນ;

2. ການຢັ້ງຢືນຄວາມພ້ອມການອອກຈໍາໜ່າຍຮຸ້ນ ຈາກທີ່ປຶກສາດ້ານການເງິນ ແລະ ຜູ້ຄໍ້າປະກັນການອອກຈໍາໜ່າຍ ທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຈະຖືກປັບໃໝ 100.000.000 ກີບ;

3. ບຸກຄົນ ຫຼື ນິຕິບຸກຄົນ ຊື້-ຂາຍ ຫຼື ໂອນ ຮຸ້ນທີ່ອອກຈໍາໜ່າຍໃນວົງຈໍາກັດ ພາຍໃນເວລາ ໜຶ່ງ ປີ ນັບແຕ່ວັນສໍາເລັດການອອກຈໍາໜ່າຍຮຸ້ນໃນວົງຈໍາກັດ ເປັນຕົ້ນໄປ ຈະຖືກປັບໃໝ ໜຶ່ງເທົ່າ ຂອງຈໍານວນເງິນກໍາໄລທີ່ໄດ້ຈາກການ ຊື້ ຂາຍ, ໃນກໍລະນີບໍ່ມີກໍາໄລ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 3.000.000 ກີບ;

4. ການນໍາໃຊ້ຄັງສະເພາະສ່ວນເພີ່ມມູນຄ່າຮຸ້ນ ເພື່ອຈ່າຍເຂົ້າໃນເປົ້າໝາຍອື່ນທີ່ບໍ່ສອດຄ່ອງກັບທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ສອງສ່ວນຮ້ອຍ (2%) ຂອງຈໍານວນເງິນທີ່ບໍລິສັດໄດ້ນໍາໃຊ້ ພ້ອມທັງນໍາເງິນຈໍານວນດັ່ງກ່າວ ກັບຄືນເຂົ້າຄັງສະເພາະສ່ວນເພີ່ມມູນຄ່າຮຸ້ນ;

5. ລາຍງານລ່າຊ້າ, ລາຍງານບໍ່ຖືກຕ້ອງ ຕາມຄວາມເປັນຈິງ ຫຼື ບໍ່ລາຍງານ ກ່ຽວກັບການນໍາໃຊ້ທຶນທີ່ລະດົມໄດ້ ຈະຖືກປັບໃໝ ດັ່ງນີ້:

5.1. ລາຍງານຊັກຊ້າ ຫຼາຍກວ່າ 5 ວັນ ຈະຖືກປັບໃໝ 1.000.000 ກີບ ຕໍ່ວັນ;

5.2. ລາຍງານບໍ່ຖືກຕ້ອງ ຄັ້ງທໍາອິດຈະແຈ້ງໃຫ້ປັບປຸງຄືນໃຫ້ຖືກຕ້ອງ ກໍລະນີບໍ່ປັບປຸງຄືນ ຈະຖືກປັບໃໝ 30.000.000 ກີບ;

5.3. ບໍ່ລາຍງານ ຈະຖືກປັບໃໝ 50.000.000 ກີບ.

ມາດຕະການເພີ່ມເຕີມ ຕໍ່ບໍລິສັດ ມີດັ່ງນີ້:

1. ໃຫ້ແກ້ໄຂການລະເມີດຂອງຕົນຄືນໃຫ້ຖືກຕ້ອງຕາມການກຳນົດຂອງກົດໝາຍ ແລະ ລະ ບຽບການທີ່ກ່ຽວຂ້ອງ;

2. ໂຈະ ແລະ/ຫຼື ຍົກເລີກ ກ່ຽວກັບການອອກຈຳໜ່າຍຮຸ້ນ;

3. ເປີດເຜີຍ ກ່ຽວກັບການລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ລົງໃນເວັບໄຊ ຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ພາຍຫຼັງທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອອກຂໍ້ຕົກລົງປັບໃໝ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 48 ການຈັດຕັ້ງປະຕິບັດ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ, ບໍລິສັດອອກຈຳໜ່າຍຮຸ້ນ, ບໍລິສັດຫຼັກຊັບ, ບໍລິສັດກວດສອບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການອອກຈຳໜ່າຍຮຸ້ນຢູ່ ສປປ ລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມຂອບເຂດ ສິດ ແລະ ໜ້າທີ່ ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 49 (ປັບປຸງ) ຜົນສັກສິດ**

ຂໍ້ຕົກລົງສະບັບ ນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນ ຂໍ້ຕົກລົງວ່າດ້ວຍການອອກຈຳໜ່າຍຮຸ້ນ (ສະບັບປັບປຸງ) ສະບັບເລກທີ 26/ຄຄຊ, ລົງວັນທີ 29 ມີນາ 2022.

ຮອງປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ວັດທະນາ ດາລາລອຍ